# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 2 ເມສາ 2017 (4-2-2017)

---

## ຊັຍຊະນະຕໍ່ຄວາມຢ້ານກົວ

*ແມ່ນຫຍັງຄືຄວາມຢ້ານກົວບາງຢ່າງທີ່ທ່ານມີຢູ່ ທີ່ມັນພຸ່ງຂຍາຍຕົວຂຶ້ນຢ່າງໄວ?*

**ຈຸດສຳຄັນໃນບົດຮຽນ**: ຜູ້ທີ່ເຊື່ອບໍ່ມີເຫດຜົນຕໍ່ຄວາມຢ້ານກົວວ່າຈະຖືກແຍກຈາກພຣະເຈົ້າແລະຈາກຄວາມຮັກຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ເໝືອນກັບເດັກນ້ອຍທຸກຄົນທີ່ມີຄວາມຢ້ານກົວອັນໃຫຍ່ຫຼວງຕໍ່ການຖືກປະປ່ອຍຖິ້ມຢ້ານພໍ່ແມ່ປະລາວໄວ້ໃນມື້ໃດມື້ນຶ່ງແລ້ວບໍ່ກັບມາອີກເລີຍ. ທ່ານອາດເຄີຍໄດ້ເຫັນເດັກນ້ອຍຮ້ອງໄຫ້ເມື່ອຜູ້ປົກຄອງຂອງລາວຍ່າງໄປອີກຫ້ອງອື່ນບໍ່? ເດັກນ້ອຍຄົນນັ້ນບໍ່ເຂົ້າໃຈວ່າພໍ່ຂອງລາວກໍຍັງຢູ່ໃກ້ໆລາວນັ້ນເອງ. ຫຼື ທ່ານອາດຈະຍັງຈື່ຈຳໄດ້ຕອນທີ່ທ່ານຫຼົງຈາກແມ່ຢູ່ໃນຕລາດ. ຄວາມຢ້ານກົວໄດ້ເພີ້ມຂຶ້ນຈົນກວ່າເຮົາໄດ້ຫລຽວເຫັນແມ່.

ເບິ່ງໃນອີກແງ່ນຶ່ງ, ພວກເຮົາບໍ່ເຄີຍເອົາຊະນະຄວາມຢ້ານກົວ. ພວກເຮົາບໍ່ມັກຖືກປະໃຫ້ຢູ່ໂດດດ່ຽວດຽວດາຍໃນຊີວິດຂອງພວກເຮົາ. ພວກເຮົາຈະບຸກບືນຕໍ່ຫຼາຍສິ່ງຫຼາຍຢ່າງ ຊຶ່ງລວມທັງໝູ່ເພື່ອນທີ່ບໍ່ດີແລະແມ້ກະທັ້ງຊີວິດແຕ່ງງານທີ່ຍາກລຳບາກ ເຫດຜົນກໍຄືບໍ່ຢາກຖືກປະປ່ອຍໃຫ້ຢູ່ໂດດດ່ຽວ. ມີຫຼາຍກໍຣະນີທີ່ເຮັດໃຫ້ຢ້ານກົວແບບນີ້ຢູ່, ເຖິງແມ່ນວ່າເປັນພວກຕິດຕາມພຣະຄຣິດແລ້ວກໍຕາມ. ພວກເຮົາບໍ່ໄດ້ຢ້ານກົວຕໍ່ຄວາມຫຍຸ້ງຍາກລຳບາກຫຼືປະສົບການອັນເຈັບປວດ, ແຕ່ວ່າພວກເຮົາຢ້ານວ່າພຣະເຈົ້າຈະບໍ່ສາມາດຕິດຕາມການກະທຳຂອງພວກເຮົາ ຫຼືວ່າບາງຢ່າງອາດເກີດຂຶ້ນເຮັດໃຫ້ພຣະອົງປະຖິ້ມພວກເຮົາໄປໄດ້.

ດັ່ງນັ້ນຈຶ່ງເປັນເຫດໃຫ້ພຣະທັມໂຣມບົດທີ 8 ເປັນບົດທີ່ມີຣິດອຳນາດໃນພຣະຄັມພີ. ທ່ານໂປໂລໄດ້ບັນທຶກດ້ວຍຄວາມໝັ້ນໃຈເພື່ອຮັບປະກັນໃຫ້ພວກເຮົາຮູ້ວ່າບໍ່ມີສິ່ງໃດ ແມ້ກະທັ້ງຄວາມຕາຍ ກໍບໍ່ສາມາດແຍກພຣະເຢຊູໃຫ້ອອກຈາກພວກເຮົາໄດ້. ແມ່ນຫຍັງທີ່ເຮັດໃຫ້ທ່ານໂປໂລມີຄວາມໝັ້ນໃຈຢ່າງນັ້ນ? ໃຫ້ພວກເຮົາເວົ້າໄດ້ວ່າທ່ານໄດ້ຜ່ານການທົດສອບໃນຄຳສັນຍາແຫ່ງພຣະຄຸນແລ້ວ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1 ແລະ 2 )

### ສຶກສາພຣະຄັມພີ

**1. <u>ໂຣມ 8:31-34</u>**

*31 ຖ້າເປັນຢ່າງນັ້ນເຮົາທັງຫຼາຍຈະວ່າຢ່າງໃດກ່ຽວກັບເຣື່ອງນີ້ ຖ້າພຣະເຈົ້າຊົງຢູ່ຝ່າຍພວກເຮົາໃຜຈະຕໍ່ສູ້ເຮົາ 32 ພຣະ*
*ອົງຜູ້ບໍ່ໄດ້ຊົງຫວງພຣະບຸດຂອງພຣະອົງເອງ ແຕ່ໄດ້ຊົງປະທານພຣະບຸດນັ້ນໄວ້ເພື່ອປໂຍດແກ່ເຮົາທັງຫຼາຍ ຖ້າເປັນດັ່ງ*
*ນັ້ນພຣະອົງຈະບໍ່ຊົງໂຜດປະທານສິ່ງສາຣະພັດໃຫ້ພວກເຮົາດ້ວຍກັນກັບພຣະບຸດນັ້ນຫຼື. 33 ໃຜອາດຈະຟ້ອງຄົນທັງ*
*ຫຼາຍທີ່ພຣະເຈົ້າຊົງເລືອກໄວ້ແລ້ວ ພຣະເຈົ້າໄດ້ຊົງປົດປ່ອຍເຂົາແລ້ວ. 34 ໃຜຈະເປັນຜູ້ລົງໂທດອີກ ພຣະເຢຊູຄຣິດໄດ້*

*ຊົງສິ້ນພຣະຊົນແລ້ວ ແລະຫຼາຍກວ່ານັ້ນອີກໄດ້ຊົງຄືນພຣະຊົນແລ້ວ ພຣະອົງຊົງສະຖິດຢູ່ກ້ຳຂວາພຣະຫັດຂອງພຣະເຈົ້າ ພຣະອົງນັ້ນແຫຼະ, ຊົງອ້ອນວອນເພື່ອເຮົາທັງຫຼາຍດ້ວຍ.*

ຈົດໝາຍຂອງທ່ານໂປໂລທີ່ຂຽນໄປເຖິງກຸງໂຣມເປັນຈົດໝາຍທີ່ຍາວກວ່າໝູ່. ໃນນັ້ນ, ທ່ານໄດ້ອະທິບາຍເລື່ອງຂ່າວປະເສີດທີ່ຈະແຈ້ງແລະເລິກເຊິ່ງ. ເຈັດບົດທຳອິດນັ້ນແມ່ນເລື່ອງຂອງຄວາມບາບຊຶ່ງເປັນທັມມະຊາດຂອງໂລກມະນຸດ, ເປັນຫຍັງຄວາມບາບນັ້ນຈຶ່ງນຳຄວາມຫາຍຍະນະມາສູ່ຊີວິດຂອງພວກເຮົາ, ແລະຄວາມຕັ້ງໃຈທີ່ຈະກຳຈັດຄວາມບາບດ້ວຍຕົວເຮົາເອງນັ້ນກໍໄຮ້ຜົນ. ຕລອດທັງເຈັດບົດນັ້ນ, ທ່ານໂປໂລໄດ້ຊີ້ໃຫ້ເຫັນພຣະເຢຊູທີ່ໄດ້ສຳແດງຄວາມລອດພົ້ນໃຫ້ພວກເຮົາໂດຍຜ່ານຄວາມເຊື່ອໃນພຣະຄຣິດແລະສິ່ງທັງໝົດທີ່ພຣະອົງໄດ້ກະທຳສຳລັບພວກເຮົານັ້ນ

ຂະນະທີ່ທ່ານໂປໂລໄດ້ກ່າວໃນໂຣມບົດທີ 8, ທ່ານໄດ້ວາງຄວາມຈິງໄວ້ຢ່າງຕໍ່ເນື່ອງກ່ຽວກັບຜົນປໂຍດອັນຍິ່ງໃຫຍ່ທີ່ພວກເຮົາໄດ້ຮັບເພາະເນື່ອງດ້ວຍກິຈການການໄຖ່ບາບຂອງພຣະຄຣິດສຳລັບພວກເຮົາ

- ພວກເຮົາໄດ້ຮັບພຣະວິນຍານບໍຣິສຸດຂອງພຣະອົງ (ຂໍ້ 9).
- ພວກເຮົາໄດ້ຄືນມີຊີວິດຢ່າງສົມບູນໃນພຣະຄຣິດ (ຂໍ້ 11).
- ພວກເຮົາຖືກຮັບເປັນລູກບຸນທັມເຂົ້າໃນຄອບຄົວຂອງພຣະອົງ (ຂໍ້ 15).
- ພວກເຮົາໄດ້ມີສ່ວນຮ່ວມຮັບມໍຣະດົກກັບພຣະຄຣິດ (ຂໍ້ 17).
- ພວກເຮົາມີສະງ່າຣາສີຕັ້ງໄວ້ລໍຖ້າໃນອະນາຄົດຂອງພວກເຮົາ (ຂໍ້ 18-23).
- ພວກເຮົາມີພຣະວິນຍານບໍຣິສຸດເປັນຕົວແທນຂາບທູນຕໍ່ພຣະບິດາສຳລັບພວກເຮົາ (ຂໍ້ 26).

ຂະນະທີ່ທ່ານໂປໂລໄດ້ເຖິງຂັ້ນສຸດຍອດໃນຂໍ້ 31, ທ່ານໄດ້ຖາມແບບງ່າຍໆວ່າ: "ຖ້າເປັນຢ່າງນັ້ນເຮົາທັງຫຼາຍຈະວ່າຢ່າງໃດກ່ຽວກັບເລື່ອງນີ້? ຖ້າພຣະເຈົ້າຊົງຢູ່ຝ່າຍພວກເຮົາ, ໃຜຈະຕໍ່ສູ້ເຮົາ? ພວກເຮົາບໍ່ສາມາດເບິ່ງຂ່າວປະເສີດໃນແງ່ຕ່າງໆຂອງຂ່າວປະເສີດ ແລະບໍ່ສາມາດເຫັນໄດ້ວ່າ "ພຣະເຈົ້າຊົງຢູ່ຝ່າຍພວກເຮົາ." ແລະເມື່ອພວກເຮົາເຂົ້າໃຈວ່າພຣະເຈົ້າຊົງຢູ່ຝ່າຍພວກເຮົາແລ້ວ, ບໍ່ວ່າໃຜກໍຕາມຈະຕໍ່ສູ້ພວກເຮົາບໍ່ໄດ້ເດັດຂາດ.

| *ແມ່ນຫຍັງທີ່ຊ່ວຍໃຫ້ທ່ານຮູ້ຈັກວ່າພຣະເຈົ້າຊົງຢູ່ຝ່າຍທ່ານ?* |
|---|

ບັດນີ້, ເຮົາເຂົ້າໃຈເຖິງຄວາມດົ້ນລົນຂອງຄຣິສຕຽນໃນກຸງໂຣມທີ່ໄດ້ຍິນຂ່າວນີ້ ໂບດທົ່ວໂລກໃນສມັຍເລີ້ມຕົ້ນພົບກັບຄວາມຫຍຸ້ງຍາກຢູ່ສເມີ, ແລະໂບດໃນກຸງໂຣມກໍບໍ່ມີຂໍ້ຍົກເວັ້ນ. ພຽງແຕ່ສອງສາມປີຫຼັງຈາກໄດ້ຮັບຈົດໝາຍສະບັບນີ້ຈາກທ່ານໂປໂລ, ພວກຄຣິສຕຽນກໍຖືກກົດຂີ່ຂົ່ມເຫັງຢ່າງໜັກພາຍໃຕ້ອຳນາດຂອງຈັກກະພັດ ນີໂຣ. ເຂົາເຈົ້າກໍໄດ້ຮູ້ວ່າມັນເປັນແນວໃດທີ່ທຸກໆຄົນຕໍ່ຕ້ານກັບເຂົາເຈົ້າ ເຫັນວ່າພິເສດອີຫລີ, ທີ່ໄດ້ຖືກເຕືອນໄວ້ວ່າພຣະເຈົ້າຈະບໍ່ປະຖິ້ມໂບດຂອງພຣະອົງຫຼືປະໃຫ້ເຂົາເຈົ້າຜ່າຍແພ້.

ພວກເຮົາຈະຮູ້ແນ່ນອນໄດ້ຢ່າງໃດ? ເພາະວ່ານີ້ແມ່ນພຣະເຈົ້າອົງດຽວກັນກັບພຣະເຈົ້າທີ່ໄດ້ປະທານພຣະບຸດໃຫ້ກັບພວກເຮົາ. ແລະຂນະທີ່ພຣະອົງຊົງເຕັມໃຈປະທານພຣະເຢຊູໃຫ້ແກ່ພວກເຮົາ, ເປັນຫຍັງພຣະອົງຈຶ່ງຈະລະເຫລີງແນວອື່ນໆ.

ພວກເຮົາມີບ່ອນຢືນທີ່ໝັ້ນຄົງຕໍ່ພຣະພັກພຣະເຈົ້າຍ້ອນກິຈການທີ່ພຣະຄຣິດໄດ້ຊົງກະທຳ ບໍ່ພຽງແຕ່ເທົ່ານັ້ນ, ແຕ່ພຣະເຢຊູກຳລັງທຳງານຕາງໜ້າໃຫ້ພວກເຮົາ: ພຣະອົງຍັງ "ຊົງສະຖິດຢູ່ກ້ຳຂວາພຣະຫັດຂອງພຣະເຈົ້າເພື່ອເປັນທະນາຍຄວາມເພື່ອພວກເຮົາ." ດັ່ງນັ້ນພວກເຮົາຈຶ່ງມີຄຳຕອບຕໍ່ຄຳຖາມສອງຂໍ້ຂອງອາຈານໂປໂລໃນຂໍ້ 34-35: ພຣະເຈົ້າ, ຊົງເປັນຜູ້ພິພາກສາທີ່ທ່ຽງທັມ, ພຣະອົງເທົ່ານັ້ນທີ່ສາມາດໃສ່ໂທດພວກເຮົາ, ແຕ່ພຣະອົງບໍ່ລົງໂທດພວກເຮົາ. ເໜືອໄປກວ່ານັ້ນ, ພຣະອົງປະທານພຣະບຸດຂອງພຣະອົງເພື່ອຄວາມລອດພົ້ນຂອງພວກເຮົາ, ອົງທີ່ກຳລັງອະທິຖານອ້ອນວອນເພື່ອພວກເຮົາ. ດັ່ງນັ້ນຈຶ່ງຖືກຮ້ອງວ່າເປັນຂ່າວປະເສີດ.

ທ່ານໂປໂລຮູ້ຈັກວ່າເພິ່ນກຳລັງເວົ້າເຣື່ອງຫຍັງ. ເຖິງແມ່ນວ່າເພິ່ນບໍ່ໄດ້ຂຽນຈົດໝາຍສະບັບນີ້ຕອນທີ່ຖືກຄຸກຢູ່ກໍຕາມ, ທ່ານໂປໂລກໍມີສ່ວນໃນການຖືກຈຳຈອງໃນຄຸກ. ເພິ່ນຮູ້ເຖິງຄວາມຍາກລຳບາກ. ເພິ່ນຮູ້ຈັກຝ່າຍກົງກັນຂ້າມ. ແລະເພິ່ນກໍຍັງຮູ້ວ່າພຣະເຈົ້າຊົງສະຖິດຢູ່ນຳດ້ວຍ. ທຸກໆສິ່ງທີ່ເພິ່ນບັນທຶກໄວ້ໃນພຣະທັມໂຣມບົດທີ 8, ເພິ່ນຜ່ານປະສົບການນັ້ນມາກ່ອນແລ້ວ. ຄວາມຊົມຊື່ນຍິນດີທີ່ພຸ່ງອອກມາຈາກຂໍ້ພຣະຄຳເຫຼົ່ານີ້ແມ່ນຂຶ້ນຢູ່ກັບພື້ນຖານຄວາມເປັນຈິງທີ່ທ່ານໂປໂລໄດ້ປະສົບການໂດຍຕົວທ່ານເອງ ຈາກເຣື່ອງລາວການກັບໃຈໃນການເດີນທາງໄປເມືອງດາມາເຊ (ກິຈການ 9:1-6) ຈົນເຖິງການນະມັສການໃນຄຸກທີ່ເມືອງຟີລິບປອຍຈົນແຜ່ນດິນໄຫວ(ກິຈການ 16:25-26), ທ່ານໂປໂລໄດ້ພົບວ່າພຣະຄຣິດຊົງສັດຊື່ແລະສະຖິດຢູ່ນຳຕລອດເວລາ.

| |
|---|
| *ໃນຖານະທີ່ທ່ານໄດ້ເປັນຜູ້ຕິດຕາມພຣະຄຣິດເມື່ອໃດທີ່ທ່ານຮູ້ສຶກຕໍ່ການຕຳໜິຕິຕຽນຫຼືການກ່າວປະນາມ?* |

## 2. <u>ໂຣມ 8:35-39:</u>

*[35] ໃຜຈະໃຫ້ພວກເຮົາຂາດຈາກຄວາມຮັກຂອງພຣະຄຣິດໄດ້ ຈະເປັນຄວາມທຸກລຳບາກ ຫລືຄວາມທໍຣະມານຈິດໃຈ ຫຼືການຂົ່ມເຫັງ ຫຼືການອຶດຢາກ ຫຼືການເປືອຍກາຍ ຫຼືການຖືກໂພຍພັຍ ຫຼືການຖືກຄົມດາບຫຼື [36] ຕາມທີ່ຂຽນໄວ້ໃນພຣະຄັມພີແລ້ວວ່າ, "ເພາະເຫັນແກ່ພຣະອົງພວກຂ້າພຣະອົງຈຶ່ງຖືກຂ້າໝົດມື້ຈົນຄ່ຳ ແລະຖືວ່າເປັນຢ່າງໂຕແກະສຳລັບເອົາໄປຂ້າ." [37] ແຕ່ວ່າໃນເຫດການທັງປວງເຫຼົ່ານີ້ພວກເຮົາກໍມີຊັຍຊະນະຢູ່ຢ່າງເຫຼືອລົ້ນ ດ້ວຍພຣະອົງຜູ້ຊົງຮັກເຮົາທັງຫຼາຍນັ້ນ. [38] ເຫດວ່າເຮົາເຊື່ອຢ່າງໝັ້ນຄົງວ່າ ຄວາມຕາຍຫຼືຊີວິດກໍດີ ເທວະດາຫຼືຜູ້ປົກຄອງກໍດີ ສິ່ງທີ່ມີຢູ່ດຽວນີ້ຫຼືສິ່ງຈະມີມາໃນພາຍໜ້າກໍດີ ຫຼືຣິດເດດທັງຫຼາຍ, [39] ຄວາມສູງ ຫຼືຄວາມເລິກກໍດີ ຫຼືສິ່ງອື່ນໃດທີ່ໄດ້ຊົງສ້າງແລ້ວນັ້ນກໍດີ ກໍຈະບໍ່ສາມາດເຮັດໃຫ້ພວກເຮົາຂາດຈາກຄວາມຮັກຂອງພຣະເຈົ້າ ຊຶ່ງມີຢູ່ໃນພຣະເຢຊູຄຣິດເຈົ້າຂອງເຮົາທັງຫຼາຍນັ້ນ*

ທ່ານໂປໂລຈິງຈັງຢູ່ສເມີ. ທ່ານຖືກກົດຂີ່ຂົ່ມເຫັງຕໍ່ການຮັບໃຊ້ພຣະເຈົ້າຂອງທ່ານ, ແລະທ່ານກໍຈະຖືກທົນທຸກທໍຣະມານອີກ. ຄຣິສຕະຈັກກໍຮູ້ແລະຈະສືບຕໍ່ຮູ້ຈັກອີກຕໍ່ໄປ ເຖິງຄາວແຫ່ງຄວາມຍາກລຳບາກ, ຄາວຖືກກົດຂີ່ຂົ່ມເຫັງ, ຄາວທົນທຸກທໍຣະມານ. "ເພາະເຫັນແກ່ພຣະອົງພວກຂ້າພຣະອົງຈຶ່ງຖືກຂ້າໝົດມື້ຈົນຄ່ຳ ແລະຖືວ່າເປັນຢ່າງໂຕແກະສຳລັບເອົາໄປຂ້າ."

ຂນະທີ່ສິ່ງເຫຼົ່ານີ້ເປັນຄວາມຈິງ, ມີສິ່ງນຶ່ງອີກທີ່ມີຄວາມສັດຈິງຫຼາຍກວ່ານັ້ນ: ພຣະຄຣິດຊົງສະຖິດນຳຕລອດເວລາ, ບໍ່ພຽງແຕ່ພຣະຄຣິດສະຖິດຢູ່ນຳເທົ່ານັ້ນ, ແຕ່ສິ່ງສຳຄັນທີ່ຕ້ອງຈຳໄວ້ສເມີກໍຄືວ່າບໍ່ມີທີ່ໃດຫຼືທາງໃດທີ່ຈະສາມາດປຸ້ນຖານະຂອງພວກເຮົາແລະດຶງພວກເຮົາອອກຈາກອ້ອມກອດຂອງພຣະຄຣິດເຈົ້າໄດ້.

ເລີ້ມຕົ້ນຈົດບັນທຶກ. ຂຽນລົງທຸກໆສິ່ງແລະທຸກໆຄົນ ທີ່ທ່ານຄິດວ່າຈະສາມາດດຶງບາງຄົນອອກຈາກພຣະຄຣິດ.

- ການຖືກຂົ່ມເຫງຈະດຶງຄົນອອກໄດ້ບໍ່? ຈະເປັນພັກການເມືອງທີ່ເອົາທ່ານເຂົ້າສູ່ບ່ອນທີ່ແມ່ນແຕ່ພຣະເຢຊູກໍບໍ່ສາມາດເຂົ້າຫາທ່ານ ໄດ້ຫລື? ບໍ່ໄດ້
- ຄວາມເຈັບປ່ວຍເດ? ຄວາມເຈັບປວດທໍຣະມານຈະສາມາດເຮັດໃຫ້ທ່ານເບິ່ງບໍ່ເຫັນຄວາມຈິງຂອງພຣະຄຣິດໃນຊີວິດຂອງທ່ານ ໄດ້ບໍ່? ບໍ່ໄດ້.
- ສິ່ງສັກສິດດັ່ງເຊັ່ນເທວະດາແລະພວກຜີມານຮ້າຍເດ? ບໍ່ໄດ້. ບໍ່ມີສິ່ງໃດຫຼືບໍ່ມີຜູ້ໃດສາມາດດຶງທ່ານອອກຈາກພຣະເຢຊູ.
- ຄວາມຕາຍເດ? ບໍ່ໄດ້, ແມ້ກະທັ້ງຄວາມຕາຍ ຊຶ່ງເປັນເໝືອນໂຈນທີ່ຈອບຄອຍດົນນານເພື່ອລັກເອົາຄວາມໝາຍແລະຄວາມຫວັງໃນຊີວິດ ກໍບໍ່ສາມາດດຶງທ່ານອອກຈາກພຣະຄຣິດ. ພຣະອົງເປັນຜູ້ມີຊັຍເໜືອຄວາມຕາຍນັ້ນ.

- ຄວາມໂງ່ຈ້າວຂອງພວກເຮົາເອງເດ? ການທີ່ທ່ານໄດ້ເຮັດບາງສິ່ງທີ່ຜິດຢ່າງມະຫັນຈົນທ່ານກາຍເປັນຄົນທີ່ເປິະເປື້ອນສຳລັບພຣະເຢຊູທີ່ຈະຊ່ວຍໄດ້ສາມາດດຶງອອກໄດ້ບໍ່? ບໍ່ໄດ້. ຄວາມຈິງຍັງເໝືອນເດີມ: ບໍ່ມີອັນໃດທີ່ຈະແຍກທ່ານອອກຈາກຄວາມຮັກຂອງພຣະຄຣິດໄດ້.

| |
|---|
| *ເຫດການນາບຄູ່ອັນໃດໃນຂໍ້ພຣະຄັມພີເຫຼົ່ານີ້ທີ່ເຮັດໃຫ້ລົດຜ່ອນຄວາມໝັ້ນໃຈຂອງທ່ານຈາກພຣະເຈົ້າ?* |

ແມ່ນຫຍັງທີ່ເຮັດໃຫ້ທ່ານໂປໂລມີຄວາມໝັ້ນໃຈຢ່າງນີ້? ໃຫ້ພວກເຮົາເວົ້າໄດ້ວ່າ ທ່ານໄດ້ຮຽນໃນທາງຍາກ. ຍົກຕົວຢ່າງ, ທ່ານໄດ້ຮູ້ຈັກເຖິງຄວາມຍາກລຳບາກຂອງການຖືກຈຳຄຸກທີ່ບໍ່ເປັນທັມນັ້ນ ທ່ານໄດ້ຖືກຂ້ຽນຫ້າເທື່ອໆລະ 39 ບາດ. ພວກທະຫານໂຣມໄດ້ທຸບຕີທ່ານເຖິງສາມເທື່ອ. ສັດຕຣູຂອງທ່ານໄດ້ແກວ່ງກ້ອນຫີນໃສ່ທ່ານແລະປະໃຫ້ຕາຍ. ທ່ານປະເຊີນຕໍ່ອັນຕະລາຍຫຼາຍໆຢ່າງຈາກຊາວຢິວ, ຈາກພວກຕ່າງຊາດ, ຈາກພວກໂຈນແລະຈາກພວກຄຣູສອນປອມ. ທ່ານຮູ້ຈັກເຖິງຄວາມອຶດຫິວ, ກະຫາຍນ້ຳ, ແລະຂາດເຂີນເຄື່ອງນຸ່ງຫົ່ມ(ເບິ່ງ 2 ກຣທ. 11:24-27). ເຖິງປານນັ້ນທ່ານກໍອົດທົນໄດ້, ທ່ານໂປໂລບໍ່ເຄີຍຖືກແຍກຈາກຄວາມຮັກຂອງພຣະຄຣິດເລີຍ.

| |
|---|
| *ຄວາມໝັ້ນໃຈຂອງທ່ານໂປໂລໃນຂໍ້ 35-39 ຊ່ວຍພວກເຮົາໃຫ້ພົບຊັຍຊະນະເໜືອຄວາມຢ້ານໄດ້ຢ່າງໃດ?* |

| |
|---|
| **"ຄວາມຢ້ານແລະບໍ່ຢ້ານກົວນັ້ນເປັນສິ່ງທັມມະດາຂອງຄວາມເຊື່ອ."** A.W. Tozer |

## <u>ນຳໃຊ້ໃນຊີວິດ</u>:

ສາວົກຂອງພຣະເຢຊູບໍ່ສາມາດແຍກຈາກຄວາມຮັກຂອງພຣະອົງຈັກເທື່ອ. ອາທິດນີ້ຢາກໃຫ້ປະຕິບັດຕາມຂັ້ນຕອນຕໍ່ໄປນີ້ໃນການໂຕ້ຕອບຕໍ່ຄວາມຈິງທີ່ໄດ້ກ່າວມານັ້ນ:

- **ຈົດບັນທຶກເປັນລຳດັບ.** ໃຫ້ຂຽນສິ່ງສະດຸດຕ່າງໆທີ່ທ່ານຮູ້ສຶກວ່າມັນຕໍ່ຕ້ານກັບທ່ານໃນເວລານີ້. ຢາກໃຫ້ທ່ານຮູ້ວ່າພຣະເຈົ້າສາມາດທຳງານໃນຕົວທ່ານແລະເພີ້ມພລັງທ່ານໃຫ້ຜ່ານຜ່າໃນເວລານີ້.
- **ເປີດໃຈ.** ສ່ວນຫຼາຍພວກເຮົາຍອມໃຫ້ຄວາມຢ້ານແລະຄວາມອັບອາຍປົດລ້ອມຫົວໃຈຂອງພວກເຮົາເມື່ອປະເຊີນກັບບັນຫາຕ່າງໆທີ່ຫຍຸ້ງຍາກ. ແທນທີ່, ການມີຄວາມຕັ້ງໃຈກ່ຽວກັບການແບ່ງປັນປະສົບການຕ່າງໆກັບບາງຄົນໃນອາທິດນີ້. ສາລະພາບບັນຫາຕ່າງໆຂອງທ່ານແລະຊອກສແວງຫາຄວາມຮັກຂອງພຣະເຈົ້າຢ່າງເອົາຈິງເອົາຈັງ.
- **ກ້າຫານ.** ຄວາມຢ້ານກົວຂອງພວກເຮົາກໍມີທາງທີ່ເຮັດໃຫ້ພວກເຮົາຫຼີກເວັ້ນຈາກການປະຕິບັດງານເພື່ອພຣະຄຣິດ. ອາທິດນີ້, ຈົ່ງກ້າວອອກໄປຢ່າງກ້າຫານເພື່ອສະແດງຄວາມເຊື່ອຂອງທ່ານທີ່ມີຫຼັກຖານວ່າທ່ານບໍ່ສາມາດຖືກແຍກຈາກຄວາມຮັກຂອງພຣະເຈົ້າ. ເວົ້າກັບບາງຄົນກ່ຽວກັບເລື່ອງຂ່າວປະເສີດ, ຕັດສິນໃຈແນ່ວແນ່ໃນການງານຮັບໃຊ້ພຣະເຈົ້າ, ສະລະຊັບສົມບັດຂອງທ່ານ, ແລະສິ່ງອື່ນໆອີກ.

ທ່ານອາດຈະຖືກປະປ່ອຍຫຼືລືມໄລເມື່ອຕອນເປັນເດັກນ້ອຍ, ແຕ່ວ່າທ່ານຈະບໍ່ຖືກແຍກຈາກພຣະບິດາຂອງທ່ານໃນຖານະເປັນບຸດຂອງພຣະເຈົ້າ. ຂໍໃຫ້ຄວາມຈິງນັ້ນຊ່ວຍທ່ານໃຫ້ມີຄວາມໝັ້ນໃຈໃນຂນະທີ່ທ່ານຢູ່ເພື່ອພຣະອົງໃນອາທິດນີ້.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA